


# ເມືອງຊິນເປບໍລິການຊ່ວຍເຫຼືອປະກັນສຸຂະພາບສໍາຫຼັບຜູ້ຢູ່ອາໃສໃໝ່

ນັບຕັ້ງແຕ່ວັນທີ່1 ມັງກອນປີ2019 ທາງເມືອງໄດ້ມີ"ແຜນການຊ່ວຍເຫຼືອຜູ້ທີ່ຢູ່ອາໃສໃໝ່"ຊ່ວຍເຫຼືອທາງດ້ານການແພດ,ພຽງແຕ່ຜູ້ຢູ່ອາໃສໃໝ່ອາໃສຢູ່ໃນເມືອງນີ້,ຫລັງຈາກແຕ່ງງານອາໃສຢູ່ ຫົກ ເດືອນແຮກທີ່ຍັງບໍ່ທັນໄດ້ຮັບບັດປະກັນສຸຂະພາບ,ຖ້າວ່າເກີດອຸປະຕິເຫດຫລືເຈັບປ່ວຍ,ຕ້ອງຈ່າຍຄ່າປິ່ນປົວ,ເຮົາສາມາດຂໍຮັບເງິນຊ່ວຍເຫຼືອໄດ້ທີ່ເມືອງທີ່ເຮົາອາໃສຢູ່,ທີ່ສໍານັກງານຄຸ້ມຄອງຫຼັກຊັບ ເພື່ອລົດຄ່າໃຊ້ຈ່າຍ,ຜູ້ຢູ່ອາໃສໃໝ່ສາມາດຍື່ນຂໍຮັບເງິນຊ່ວຍເຫຼືອຄ່າໃຊ້ຈ່າຍໃນການຮັກສາພາຍໃນ ຫົກ ເດືອນ ຫຼັງຈາກສໍານັກງານຄຸ້ມຄອງຫຼັກຊັບກວດສອບແລະອານຸມັດ.

## 1/ບຸກຄົນທີ່ຈະໄດ້ຮັບຄວາມຊ່ວຍເຫຼືອງ

ຜູ້ຢູ່ອາໃສໃໝ່ທີ່ເມືອງອາໃສຢູ່(ຄູ່ສົມຣົດຂອງປະຊາຊົນໄຕ້ຫວັນ)ເອງ.ຫຼັງຈາກແຕ່ງງານມາອາໃສຢູ່ໃນຄັ້ງແຮກແລະຫົກເດືອນແຮກທີ່ຍັງບໍ່ໄດ້ຮັບບັດປະກັນສຸຂະພາບ,ຍ້ອນວ່າເກີດອຸປະຕິເຫດຫຼືເຈັບປ່ວຍບໍ່ໄດ້ໃຊ້ບັດປະກັນສຸຂະພາບ,ຈ່າຍຄ່າປິ່ນປົວ.

## 2/ມາດຕະຖານເງິນຊ່ວຍເຫຼືອ.

(1) ຄ່າປິ່ນປົວຕົນເປັນສະກຸນເງິນໂດລາໄຕ້ຫວັນ(ເຊັ່ນດັ່ງລຸ່ມນີ້)ຕໍ່າກ່ວາໜຶ່ງໝື່ນຍ໋ອນ,

ຈະໄດ້ຮັບການຊ່ວຍເຫຼືອ ຫ້າສິບເປີເຊັນ.

(2) ຄ່າປິ່ນປົວຫລາຍກ່ວາໜື່ງເຖີງສອງໝື່ນຢ໋ວນຈະໄດ້ຮັບການຊ່ວຍເຫຼືອງ ຫົກສິບເປີເຊັນ.

(3) ຄ່າປີ່ນປົວຫຼາຍກ່ວາ ສອງໝື່ນເຖີງສາມໝື່ນຢ໋ວນ,ຈະໄດ້ຮັບການຊ່ວຍເຫຼືອ ເຈັດສິບເປີເຊີ

(4) ຄ່າປີ່ນປົວຫຼາຍກ່ວາ ສາມໝື່ນຢ໋ວນຂື້ນໄປຫຼືໃນກໍລະນີສະຖານະການພິເສດ,

ຫຼັງຈາກທາງການເພີ່ນໄດ້ເຊັນອານຸມັດແລ້ວ,ການຊ່ວຍເຫຼືອງແມ່ນ ແປດສິບເປີເຊັນ

(5) ໃນການຮັບເງີນຊ່ວຍເຫຼືອວົງເງີນສູງສຸດຫ້າໝື່ນຢ໋ວນ

## 3/ຂັ້ນຕອນການສະໝັກ

(1)ເວລາຢື່ນຂໍ:

ສາເຫດຂອງການປິ່ນປົວຂອງຜູ້ຢູ່ອາໃສໃໝ່ຫຼັງຈາກປິ່ນປົວຕ້ອງຂໍຮັບເງີນຊ່ວຍເຫຼືອພາຍໃນຫົກ

ເດືອນ.ກໍລະນີຜູ້ທີ່ຈະຍື່ນຂໍແຕ່ບໍ່ສາມາດຍື່ນຂໍດ້ວຍຕົນເອງໄດ້,ສາມາດໃຫ້ຜູ້ອື່ນຊ່ວຍຍື່ນແທນໄດ້.

(2) ສະຖານທີ່ຍື່ນຂໍ:

ຍື່ນຂໍໄດ້ທີ່ສໍາຫັນກງານຄຸ້ມຄອງຫຼັກຊັບທີ່ເມືອງຕົນອາໃສຢູ່,ຫລັງຈາກສໍານັກງານຄຸ້ມຄອງຫຼັກສັບກວດ

ສອບແລະສອບຖາມ ,ອານຸມັດຈ່າຍເງີນ.

(3)ບັດປະກັນສຸຂະພາບຜ່ານການກວດສອບ:ສະຖານທີ່ ທີ່ຍື່ນຂໍຈະຕ້ອງກວດສອບຜູ້ຢູ່ອາໃສໃໝ່ ຫຼັງຈາກ

ແຕ່ງງານເຂົ້າມາຄັ້ງທໍາແຮກໃນຫົກເດືອນແຮກທີ່ຍັງບໍ່ມີບັດປະກັນສຸຂະພາບ,ຍື່ນຂໍຈະຕ້ອງໄດ້ກວດສອບ

ສໍາພາດ.

(4) ເອກະສານທີ່ຕ້ອງໃຊ້

a/ແບບຟອມໃບສະໝັກ(ເວັບໄຊທ໌ສໍານັກງານພົນລະເຮືອນຂອງເມືອງຊິນເປ)

https://www.ca.ntpc.gov.tw ສາມາດດາວໂຫຼດຫລືຈະໄປທີ່ສນັກງານຄຸ້ມຄອງຫຼັກຊັບ.

b/ໃບຮັບຮອງຕົ້ນສະບັບຈາກໂຮງໝໍ

c/ສໍາເນົາບິນຄ່າຮັກສາລະບົບປະກັນສຸຂະພາບຈາກໂຮງໝໍ

d/ບັດອານຸຍາດພັກເຊົາຕົ້ນສະບັບ

e/ກ໋ອບປີ້ປຶ້ມບັນຊີທະນາຄານຂອງຜູ້ຢູ່ອາໃສໃໝ່ດ້ານໜ້າແລະດ້ານຫຼັງ

f/ບັດປະຈໍາໂຕຕົ້ນສະບັບຂອງຜູ້ຊ່ວຍຍື່ນຂໍແລະໃບມອບສິດ.